ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ ອັດຕະປື

ເລກທີ 17 /ຈຂ.ອປ

ອັດຕະປື, ວັນທີ 28 ພ.ລ. 2018

# ຄໍາສັ່ງແນະນໍາ

ວ່າດ້ວຍມາດຕະການຈັດຕັ້ງປະຕິບັດກ່ຽວກັບ

ການຜັນຂະຫຍາຍນະໂຍບາຍສົ່ງເສີມການປູກອ້ອຍເປັນສິນຄ້າ.

**ເຖິງ:** ທ່ານເຈົ້າເມືອງ 05ເມືອງ, ພະແນກການອ້ອມຂ້າງແຂວງ, ຫ້ອງການຕ່າງໆ, ທີ່ກ່ຽວຂ້ອງຂັ້ນເມືອງ ບໍລິສັດ, ຕະຫລອດຮອດພໍ່ແມ່ປະຊາຊົນ ພາຍໃນແຂວງອັດຕະປື.

**ເລື່ອງ:** ມາດຕະການຈັດຕັ້ງປະຕິບັດກ່ຽວກັບຜັນຂະຫຍາຍນະໂຍບາຍສົ່ງເສີມການປູກອ້ອຍເປັນສິນຄ້າ.

- ອີງຕາມ ກົດໝາຍການປົກຄອງທ້ອງຖິ່ນແຫ່ງ ສ.ປ.ປ ລາວ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ໝວດທີ IV ມາດຕາ 20 ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າແຂວງ.
- ອີງຕາມ ບົດບັນທຶກປຶກສາຫາລື ກ່ຽວກັບນະໂຍບາຍສົ່ງເສີມການປູກອ້ອຍ ໃນຮູບແບບ 2+3 ຂອງບໍລິສັດ ນໍ້າຕານອ້ອຍ TTC ຈໍາກັດຜູ້ດຽວ ລົງວັນທີ 11 ກັນຍາ 2018.

ຕະຫຼອດໄລຍະຜ່ານມາ ເຫັນວ່າການຜະລິດກະສິກໍາເປັນສິນຄ້າຂອງແຂວງເຮົາ ໄດ້ມີການຂະຫຍາຍຕົວດີຂຶ້ນພໍສົມຄວນນັບທັງການປູກພືດ, ການລ້ຽງສັດ, ການລ້ຽງປາ ທັງຂອງປະຊາຊົນ, ຜູ້ປະກອບການ ແລະ ບໍລິສັດໄດ້ຂາຍອອກໄປທັງພາຍໃນ ແລະ ຕ່າງປະເທດ ເປັນການປະກອບສ່ວນເຂົ້າໃນພັດທະນາເສດຖະກິດຄອບຄົວ ແລະ ສັງຄົມຂອງແຂວງໄດ້ດີຂຶ້ນ ແລະ ເພື່ອເຮັດໃຫ້ການຜະລິດເປັນສິນຄ້າຂອງແຂວງເປັນຂະບວນການ.

**ເຈົ້າແຂວງອອກຄໍາສັ່ງແນະນໍາ:**

1. ໃຫ້ອົງການປົກຄອງເມືອງ 5 ຕົວເມືອງ ໄດ້ເປັນເຈົ້າການເພື່ອເຮັດການໂຄສະນາເຜີຍແຜ່ນະໂຍບາຍສົ່ງເສີມໃຫ້ປະຊາຊົນໄດ້ເຂົ້າຮ່ວມການປູກອ້ອຍເປັນສິນຄ້າ ເພື່ອສະໜອງໃຫ້ບໍລິສັດ ນໍ້າຕານອ້ອຍ (TTC) ຈໍາກັດຜູ້ດຽວ.ໃນຮູບແບບການຜະລິດ 2+3 ຫຼື ປະຊາຊົນເປັນຜູ້ລົງທຶນ 100% ໂດຍມີສັນຍາຜູກພັນລະຫວ່າງປະຊາຊົນ ກັບບໍລິສັດ ໂດຍມີການຢັ້ງຢືນຈາກອົງການຈັດຕັ້ງຂັ້ນເມືອງ.
2. ໃຫ້ອໍານາດການປົກຄອງຂັ້ນເມືອງ, ພະແນການທີ່ກ່ຽວຂ້ອງ ເພື່ອເຮັດການໂຄສະນາເຜີຍແຜ່ ນະໂຍບາຍ ແລະ ການສົ່ງເສີມຮ່ວມກັນໂດຍໃຫ້ມີຄະນະຄຸ້ມຄອງການຈັດຕັ້ງປະຕິບັດ ໂຄງການປູກອ້ອຍ ໃນຮູບແບບ 2+3 ຢູ່ຂັ້ນເມືອງ.

3. ໃຫ້ອຳນາດການປົກຄອງເມືອງ ສົມທົບກັບບໍລິສັດ ເພື່ອແຕ່ງຕັ້ງຄະນະກຳມະການເພື່ອລົງຕິດຕາມກວດກາ ແລະ ຊຸກຍູ້ ແນະນຳເພື່ອດຳເນີນການປູກ.

4. ໃຫ້ພະແນກກະສິກຳ ແລະ ປ່າໄມ້ ເປັນເຈົ້າການໃນການຈັດຕັ້ງກຸ່ມປູກອ້ອຍ ໃຫ້ແກ່ຊາວກະສິກອນ, ໄດ້ມີຄວາມເຂັ້ມແຂງ, ເຮັດໃຫ້ຕົວແທນກຸ່ມສາມາດເຂົ້າເຖິງຂໍ້ມູນຂ່າວສານ, ແຫຼ່ງທຶນ ແລະ ການຕະຫຼາດ.

5. ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສົມທົບກັບເມືອງ ໃນການອອກໃບຢັ້ງຢືນສິດນຳໃຊ້ທີ່ດິນໃຫ້ຖືກຕ້ອງຕາມລະບຽບການ.

6. ໃຫ້ພະແນກອຸດສະຫະກຳ ແລະ ການຄ້າ ໃຫ້ເອົາໃຈໃສ່ເຜີຍແຜ່ກ່ຽວກັບມາດຖານຄຸນນະພາບ ແລະ ລາຄາຂອງອ້ອຍໃນແຕ່ລະໄລຍະໃຫ້ແທດເໝາະກັບສະພາບຕົວຈິງ.

7. ໃຫ້ພະແນກໂຍທາທິການ ແລະ ຂົນສົ່ງ ກຳນົດຂໍ້ມູນລາຄາຄ່າຂົນສົ່ງທີ່ເໝາະສົມ ເພື່ອສະໜອງໃຫ້ບໍລິສັດ ເປັນບ່ອນອີງໃນການຄິດໄລ່ ຄ່າຂົນສົ່ງອ້ອຍ ໃນແຕ່ລະຈຸດ.

8. ໃຫ້ບໍລິສັດເຮັດປ້າຍໂຄສະນາກ່ຽວກັບນະໂຍບາຍ ແລະ ລາຄາເກັບຊື້ໃນແຕ່ລະເມືອງ ເພື່ອເປັນການເຊີນຊວນປະຊາຊົນເຂົ້າຮ່ວມ ແລະ ຮັບຮູ້ເຖິງນະໂຍບາຍຂອງບໍລິສັດເພີ່ມຕື່ມ.

9. ມອບໃຫ້ທຸກພະແນກການ, ທຸກພາກສ່ວນ ໃນສັງຄົມເປັນເຈົ້າການປຸກລະດົມປະຊາຊົນໄດ້ເຂົ້າຮ່ວມການປູກອ້ອຍເປັນສິນຄ້າຢ່າງກ້ວາງຂວາງ.

10. ມອບໃຫ້ອຳນາດການປົກຄອງບ້ານ ເປັນເຈົ້າການ ໃນການປຸກລະດົມ ແລະ ນຳພາປະຊາຊົນຈັດຕັ້ງປະຕິບັດການປູກອ້ອຍເປັນສິນຄ້າ ນຳໃຊ້ເນື້ອທີ່ດິນທີ່ເປົ່າຫວ່າງ ເຂົ້າໃນການປູກອ້ອຍໃຫ້ໄດ້ຢ່າງກວ້າງຂວາງ ເພື່ອແນໃສ່ປັບປຸງ ຊີວິດການເປັນຢູ່ຂອງຄອບຄົວ ໃຫ້ນັບມື້ດີຂຶ້ນເທື່ອລະກ້າວ.

ເມື່ອໄດ້ຮັບຄຳສັ່ງແນະນຳສະບັບນີ້ແລ້ວບັນດາເມືອງ, ພະແນກການອ້ອມຂ້າງແຂວງ ແລະ ຫ້ອງການຕ່າງໆ. ທີ່ກ່ຽວຂ້ອງຂັ້ນເມືອງ ຕະຫລອດຮອດພໍ່ແມ່ປະຊາຊົນພາຍໃນແຂວງອັດຕະປື ຈົ່ງພ້ອມກັນຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

ທ. ເຈົ້າແຂວງ

ແຂວງອັດຕະປື
ເຈົ້າແຂວງແຂວງອັດຕະປື

ພອນສະໄໝ ມຽງລາວັນ